ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 2903/ກປ
ນະຄອນຫລວງວຽງຈັນ, ວັນທີ 19 NOV 2012

# ຂໍ້ຕົກລົງ
## ຂອງລັດຖະມົນຕີ
## ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງດ່ານກວດກາສັດຕະວະແພດສາກົນ

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມດຳລັດຂອງລັດຖະບານ ເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012 ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມໜັງສືສະເໜີ ຂອງກົມລ້ຽງສັດ ແລະການປະມົງ ເລກທີ 1620/ກລປ, ລົງວັນທີ 16 ຕຸລາ 2012.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຕຳແໜ່ງງານ ແລະແບບແຜນວິທີເຮັດວຽກ ຂອງດ່ານກວດກາສັດຕະວະແພດສາກົນ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃນການຈັດຕັ້ງປະຕິບັດ ແລະການເຄື່ອນໄຫວວຽກງານຕິດຕາມກວດກາການເຄື່ອນຍ້າຍສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ຜ່ານດ່ານສາກົນຊາຍແດນເຂົ້າ-ອອກປະເທດ ໃຫ້ມີຄວາມປອດໄພ, ໂປ່ງໃສ ແລະຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 2. ດ່ານກວດກາສັດຕະວະແພດສາກົນ**

ດ່ານກວດກາສັດຕະວະແພດສາກົນ ແມ່ນຫ້ອງການ ຫລືສະຖານທີ່ ທີ່ອີງການຄຸ້ມຄອງວຽກງານການລ້ຽງສັດ ແລະການສັດຕະວະແພດຂັ້ນສູນກາງ ສ້າງຕັ້ງຂຶ້ນຢ່າງເປັນທາງການ ຢູ່ຕາມດ່ານສາກົນຊາຍແດນເຂົ້າ-ອອກປະເທດ ລວມທັງທ່າເຮືອ, ສະຖານີລົດໄຟ, ໄປສະນີ ແລະສະໜາມບິນ ເພື່ອເຮັດໜ້າທີ່ກວດກາດ້ານສັດຕະວະແພດ.

**ມາດຕາ 3. ທີ່ຕັ້ງ ແລະພາລະບົດບາດ**

ດ່ານກວດກາສັດຕະວະແພດສາກົນ ຂຽນເປັນຕົວອັກສອນຫຍໍ້ວ່າ **"ດກສ"**, ຂຽນເປັນພາສາອັງກິດວ່າ International Animal Check Point **"IAC"** ແມ່ນໜ່ວຍງານການຈັດຕັ້ງວິຊາການໜຶ່ງ ທີ່ຂຶ້ນກັບກົມລ້ຽງສັດ ແລະການປະມົງ ທາງດ້ານວິຊາສະເພາະ ແລະຂຶ້ນກັບຂະແໜງການສາຍຂວາງ ທາງດ້ານການເມືອງ.

ດ່ານກວດກາສັດຕະວະແພດສາກົນ ມີຖານະເທົ່າທຽມກັບໜ່ວຍງານອື່ນ ທີ່ສັງກັດຢູ່ພະແນກການອ້ອມຂ້າງກົມລ້ຽງສັດ ແລະການປະມົງ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກົມລ້ຽງສັດ ແລະການປະມົງ ໃນການດຳເນີນການກວດກາ, ຢັ້ງຢືນ ແລະແນະນຳກ່ຽວກັບການເຄື່ອນຍ້າຍສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດເຂົ້າ-ອອກ ສປປ ລາວ ຕາມລະບຽບການທີ່ໄດ້ກຳນົດໄວ້.

## ໝວດທີ 2
## ໜ້າທີ່ ແລະຂອບເຂດສິດຂອງດ່ານກວດກາສັດຕະວະແພດສາກົນ

**ມາດຕາ 4. ໜ້າທີ່ຂອງດ່ານກວດກາສັດຕະວະແພດສາກົນ**

ໜ້າທີ່ຕົ້ນຕໍຂອງດ່ານກວດກາສັດຕະວະແພດສາກົນ ນອກຈາກໄດ້ກຳນົດໄວ້ໃນມາດຕາ 44 ຂອງດຳລັດລັດຖະບານ ເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012 ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ແລ້ວ, ຕ້ອງປະຕິບັດໜ້າທີ່ອື່ນເພີ່ມຕື່ມ ດັ່ງນີ້:

1. ຈັດຕັ້ງປະຕິບັດມາດຕະການທາງດ້ານວິຊາການກ່ຽວກັບການປ້ອງກັນ ແລະສະກັດກັ້ນ ຄວາມສ່ຽງທີ່ເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ ຫລືສິ່ງແວດລ້ອມ ທີ່ອາດເກີດຂຶ້ນຈາກການເຄື່ອນຍ້າຍສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດເຂົ້າ-ອອກ ສປປ ລາວ;
2. ເຜີຍແຜ່, ແນະນຳ ກ່ຽວກັບລະບຽບການ ແລະຫລັກການດ້ານວິຊາການທີ່ກ່ຽວຂ້ອງກັບການຄຸ້ມຄອງການເຄື່ອນຍ້າຍສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ໃຫ້ແກ່ພາກສ່ວນຕ່າງໆ ເຂົ້າໃຈ ແລະປະຕິບັດ ພ້ອມທັງອຳນວຍຄວາມສະດວກໃຫ້ແກ່ຜູ້ເຄື່ອນຍ້າຍສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ເຂົ້າ-ອອກປະເທດ ດ້ວຍຄວາມໂປ່ງໃສ ແລະບໍ່ຈຳແນກປະຕິບັດ;
3. ປະຕິບັດການກວດກາດ້ານການສັດຕະວະແພດ ແລະພິຈາລະນາອະນຸຍາດ ຫລືບໍ່ອະນຸຍາດໃຫ້ ສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ເຄື່ອນຍ້າຍຕໍ່ໄປ;
4. ຕິດຕາມເຝົ້າລະວັງພະຍາດສັດ ຢູ່ໃນຂະບວນການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຢ່າງເຂັ້ມງວດ ໃນຂອບເຂດບໍລິເວນ ທີ່ຕົນເອງຮັບຜິດຊອບ ໂດຍການປະສານສົມທົບກັບອົງການຄຸ້ມຄອງວຽກງານການລ້ຽງສັດ ແລະການສັດຕະວະແພດຂັ້ນທ້ອງຖິ່ນ ຢ່າງເປັນປົກກະຕິ;
5. ເກັບຕົວຢ່າງຈາກສັດເຈັບ, ສັດຕາຍ, ຜະລິດຕະພັນສິນຄ້າກ່ຽວກັບສັດ, ອາຫານສັດ, ວັດຖຸດິບ, ອາຫານສັດ ຫລືຢາສັດຕະວະແພດ ທີ່ສົງໄສວ່າມີການຕິດເຊື້ອພະຍາດ ຫລືມີຄຸນນະພາບຕໍ່າ ລວມທັງສຸ່ມເກັບຕົວຢ່າງຈາກສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມແຜນເຝົ້າລະວັງປົກກະຕິ ເພື່ອສົ່ງກວດຢູ່ຫ້ອງວິໄຈ;
6. ສີດພົ່ນຢາຂ້າເຊື້ອພະຍາດ ໃນກໍລະນີພົບສັດເຈັບ ຫລື ຕາຍ ຍ້ອນເກີດພະຍາດ ລວມທັງຂ້າເຊື້ອພະຍາດຍານພາຫະນະຂົນສົ່ງ ສັດ ຫລືຜະລິດຕະພັນສັດ ໃນກໍລະນີມີຄຳສັ່ງໃຫ້ກັນ ແລະສະກັດກັ້ນການລະບາດຂອງພະຍາດສັດ ບໍ່ໃຫ້ແຜ່ລະບາດ ເຂົ້າ ຫລືອອກ ປະເທດ;
7. ຕິດຕາມຂໍ້ມູນຂ່າວສານກ່ຽວກັບສະພາບການລະບາດຂອງພະຍາດສັດ ຢູ່ພາຍໃນ ແລະຕ່າງປະເທດ ພ້ອມທັງຊອກຫາວິທີການສະກັດກັ້ນພະຍາດສັດ ໃຫ້ທັນກັບເວລາ;
8. ຂຶ້ນແຜນ ແລະສະຫລຸບລາຍງານ ກ່ຽວກັບການເຄື່ອນໄຫວວຽກງານຂອງດ່ານກວດສັດຕະວະແພດສາກົນ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ ໃຫ້ຂັ້ນເທິງຖັດຕົນຊາບ ຢ່າງເປັນປົກກະຕິ;
9. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 5. ຂອບເຂດສິດຂອງດ່ານກວດສັດຕະວະແພດສາກົນ

ດ່ານກວດກາສັດຕະວະແພດສາກົນ ມີຂອບເຂດສິດ ດັ່ງນີ້:

1. ດໍາເນີນການກວດກາດ້ານການສັດຕະວະແພດ, ອອກໃບຢັ້ງຢືນການກວດກາສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດທີ່ນໍາເຂົ້າ ແລະສົ່ງອອກ ສປປ ລາວ ພ້ອມທັງກໍານົດເສັ້ນທາງໃນການຂົນສົ່ງເຄື່ອນຍ້າຍ;
2. ນໍາໃຊ້ມາດຕະການທີ່ຈໍາເປັນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ເພື່ອປ້ອງກັນ ແລະຄວບຄຸມຄວາມສ່ຽງທີ່ອາດເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ, ສັດ, ເສດຖະກິດ ແລະສັງຄົມ ທີ່ອາດເກີດຈາກການນໍາເຂົ້າ ແລະ ສົ່ງອອກ ສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
3. ກວດກາຍານພາຫະນະທີ່ບັນຈຸ ສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ, ການບັນຈຸ, ການຫຸ້ມຫໍ່ພ້ອມທັງພິຈາລະນາອະນຸຍາດ ຫລື ບໍ່ອະນຸຍາດ ໃຫ້ມີການປ່ຽນຖ່າຍຍານພາຫະນະຂົນສົ່ງ ສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ໃນລະຫວ່າງການເດີນທາງ;
4. ກັກກັນສັດ ເພື່ອດໍາເນີນການກວດກາ, ຕິດຕາມສັດທີ່ສົງໄສຕິດເຊື້ອ ຫລື ເປັນພະຍາດສັດ ລວມທັງມີສິດປິ່ນປົວ ແລະທໍາລາຍຊາກສັດ ທີ່ຕາຍຍ້ອນພະຍາດ ແລະຜະລິດຕະພັນສັດ ທີ່ຕິດເຊື້ອ ຫລືສົງໄສຕິດເຊື້ອພະຍາດ;
5. ຄຸ້ມຄອງ ແລະນໍາໃຊ້ພື້ນຖານວັດຖຸເຕັກນິກ, ງົບປະມານ ແລະການເງິນຂອງດ່ານ ເພື່ອບໍລິຫານວຽກງານ ຕາມລະບຽບການ ແລະແຜນການ ທີ່ໄດ້ອະນຸມັດແລ້ວ;
6. ຄຸ້ມຄອງ, ກໍ່ສ້າງບໍາລຸງ ແລະນໍາໃຊ້ ພະນັກງານ ຢູ່ພາຍໃນດ່ານກວດກາສັດຕະວະແພດ ຕາມຂອບເຂດຄວາມຮັບຜິດຊອບ ແລະການມອບໝາຍຂອງຂັ້ນເທິງ;
7. ສະເໜີການປະຕິບັດນະໂຍບາຍ ແລະປະຕິບັດວິໄນຕໍ່ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງດ່ານ;
8. ເຂົ້າຮ່ວມປະຊຸມ, ປຶກສາຫາລື, ນັບ ທັງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອປະກອບຄໍາຄິດເຫັນທີ່ພົວພັນເຖິງພາລະບົດບາດ ໜ້າທີ່ ແລະຂອບເຂດສິດຂອງດ່ານ;
9. ເຊີນພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມປະຊຸມ ເພື່ອເຜີຍແຜ່, ປຶກສາຫາລື, ແກ້ໄຂ. ຈັດປະຊຸມສໍາມະນາ ແລະຝຶກອົບຮົມດ້ານວິຊາການກ່ຽວກັບວຽກງານກວດກາການເຄື່ອນຍ້າຍ ສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ;
10. ພົວພັນຂໍຄໍາເຫັນໂດຍກົງ ຈາກການຈັດຕັ້ງຂອງຂະແໜງການກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນທີ່ກ່ຽວພັນກັບວຽກງານກວດກາການເຄື່ອນຍ້າຍ ສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
11. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອນໍາໃຊ້ມາດຕະການທີ່ຈໍາເປັນ ຕໍ່ຜູ້ລະເມີດລະບຽບກົດໝາຍກ່ຽວກັບການນໍາເຂົ້າ ແລະ ສົ່ງອອກສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ຢ່າງເຂັ້ມງວດ;
12. ເກັບຄ່າທໍານຽມ ແລະຄ່າບໍລິການ ຕາມທີ່ກໍານົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ;
13. ປະຕິບັດສິດ ອື່ນຕາມການມອບໝາຍຂອງການຈັດຕັ້ງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະພື້ນຖານໂຄງລ່າງ

ມາດຕາ 6. ໂຄງປະກອບກົງຈັກ

ດ່ານກວດກາສັດຕະວະແພດສາກົນ ມີໂຄງປະກອບກົງຈັກ ດັ່ງນີ້:

1. ຈຸງານບໍລິຫານ;

2. ຈຸງານວິຊາການ.

**ມາດຕາ 7. ສິດ ແລະໜ້າທີ່ຂອງຈຸງານບໍລິຫານ**

ຈຸງານບໍລິຫານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຮັບຜິດຊອບວຽກບໍລິຫານ ແລະຈັດຕັ້ງຂອງດ່ານ ລວມທັງວຽກພິທີການ ແລະການສື່ສານ;
2. ຄຸ້ມຄອງບຸກຄະລາກອນ, ເກັບກຳຂໍ້ມູນ ແລະການເຄື່ອນໄຫວຂອງພະນັກງານປະຈຳດ່ານ;
3. ຄຸ້ມຄອງເອກະສານ ຂາອອກ-ຂາເຂົ້າ, ຮັບ-ສົ່ງເອກະສານ, ອັດສຳເນົາເອກະສານ;
4. ຮັບຜິດຊອບວຽກງານປ້ອງກັນ ແລະຄວາມເປັນລະບຽບຮຽບຮ້ອຍຂອງດ່ານ;
5. ສ້າງແຜນງົບປະມານ, ວຽກງານບັນຊີ-ການເງິນຂອງດ່ານ;
6. ຄຸ້ມຄອງ ແລະ ນຳໃຊ້ຊັບສິນບັດຄົງທີ່, ບໍ່ຄົງທີ່ ແລະກາປະທັບຂອງດ່ານ;
7. ອຳນວຍຄວາມສະດວກ, ຈັດຫາ ແລະສະໜອງ ເຄື່ອງມືອຸປະກອນທີ່ຈຳເປັນສຳລັບການກວດກາ;
8. ປະສານງານກັບຂະແໜງການອື່ນທີ່ກ່ຽວຂ້ອງຢູ່ດ່ານສາກົນຊາຍແດນທັງພາຍໃນ ແລະດ່ານຂອງປະເທດຊາຍແດນຕິດກັບ;
9. ສະຫລຸບລາຍງານປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະປະຈຳປີ.

**ມາດຕາ 8. ສິດ ແລະ ໜ້າທີ່ຂອງຈຸງານວິຊາການ**

ຈຸງານວິຊາການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາດ້ານສັດຕະວະແພດຕາມລະບຽບ, ປຶ້ມຄູ່ມື ແລະມາດຕະຖານການປະຕິບັດງານດ້ານເຕັກນິກກ່ຽວກັບການສັດຕະວະແພດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງດຳລັດວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ພ້ອມທັງນຳສະເໜີຜົນການກວດກາໃຫ້ຫົວໜ້າດ່ານ ພິຈາລະນາອອກໃບຢັ້ງຢືນອະນຸຍາດ ຫລືບໍ່ອະນຸຍາດ ໃຫ້ເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດຜ່ານດ່ານຕໍ່ໄປໄດ້;
2. ກວດກາ ແລະເກັບຕົວຢ່າງ ຈາກສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມລະບຽບການ ໃນກໍລະນີທີ່ມີການສົງໄສຕິດເຊື້ອພະຍາດ ຫລືມີຄວາມຈຳເປັນຕ້ອງໄດ້ສົ່ງໄປກວດກາບົ່ງມະຕິຢູ່ຫ້ອງວິໄຈ;
3. ກັກ ແລະຄຸ້ມຄອງການກັກຂັງສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດຊົ່ວຄາວ ທີ່ນຳເຂົ້າ-ສົ່ງອອກຜ່ານດ່ານ ໃນກໍລະນີມີເອກະສານບໍ່ຖືກຕ້ອງ ຫລືບໍ່ຄົບຖ້ວນ ຫລືເພື່ອລໍຖ້າຜົນຂອງການວິໄຈໃນກໍລະນີທີ່ສົງໄສວ່າ ມີການຕິດເຊື້ອ ຫລືປົນເປື້ອນດ້ວຍເຊື້ອພະຍາດສັດ;
4. ດຳເນີນການຕິດຕາມກວດກາສຸຂະພາບສັດ, ສັກຢາກັນພະຍາດ, ປິ່ນປົວສັດເຈັບ, ເກັບຕົວຢ່າງຈາກສັດ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ກັກຂັງຊົ່ວຄາວ;
5. ອອກໃບຢັ້ງຢືນການກັກຂັງສັດ ແລະຜະລິດຕະພັນສັດຊົ່ວຄາວ ພາຍຫລັງທີ່ໄດ້ດຳເນີນການກວດກາຕິດຕາມ ຄົບຖ້ວນຕາມຫລັກວິຊາການດ້ານການສັດຕະວະແພດ ເປັນທີ່ຮຽບຮ້ອຍແລ້ວ ສະເໜີຫົວໜ້າດ່ານພິຈາລະນາ;
6. ກວດກາການລັກລອບການເຄື່ອນຍ້າຍສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດໃນຂອບເຂດຄວາມຮັບຜິດຊອບຂອງດ່ານ;
7. ໃຫ້ຄຳແນະນຳທາງດ້ານວິຊາການ ແລະລະບຽບການ ກ່ຽວກັບວຽກງານການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ, ສົ່ງອອກ ແລະຂົນສົ່ງຜ່ານ ສປປ ລາວ ແກ່ບັນດາຫົວໜ່ວຍທຸລະກິດ ທັງພາຍໃນ ແລະຕ່າງປະເທດ;
8. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນ ດຳເນີນການກັກຕົວຜູ້ລະເມີດລະບຽບກົດໝາຍ, ກວດຍຶດຂອງກາງ ແລະປະກອບສຳນວນຄະດີ ຍື່ນຕໍ່ພາກສ່ວນທີ່ກ່ຽວຂ້ອງ ຕາມ

ລະບຽບກົດໝາຍ ພ້ອມທັງເຂົ້າຮ່ວມໃນການດຳເນີນການສືບສວນສອບສວນຄະດີກ່ຽວກັບການລະເມີດດັ່ງກ່າວ;

9. ສະຫລຸບລາຍງານການເຄື່ອນໄຫວວຽກປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະປະຈຳປີ ໃຫ້ຈຸງານບໍລິຫານ ເພື່ອສັງລວມລາຍງານໃຫ້ແກ່ຫົວໜ້າດ່ານ.

**ມາດຕາ 9. ໂຄງປະກອບການຈັດຕັ້ງ ແລະການກຳນົດຕຳແໜ່ງງານ**

ດ່ານກວດກາສັດຕະວະແພດສາກົນ ປະກອບມີຫົວໜ້າດ່ານ 1 ທ່ານ, ຮອງຫົວໜ້າດ່ານ 1 ທ່ານ, ເຈົ້າໜ້າທີ່ສັດຕະວະແພດ ແລະວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະການສັດຕະວະແພດຂັ້ນສູນກາງ.

ດ່ານກວດກາສັດຕະວະແພດສາກົນ ມີທັງໝົດຢ່າງໜ້ອຍ 7 ຕຳແໜ່ງງານຫລັກ ດັ່ງນີ້:

1. ຫົວໜ້າດ່ານ 1 ຕຳແໜ່ງ, ມີວາລະໝູນວຽນ ທຸກໆ 2 ປີ;
2. ຮອງຫົວໜ້າດ່ານ 1 ຕຳແໜ່ງ, ມີວາລະໝູນວຽນ ທຸກໆ 1,5 ປີ;
3. ພະນັກງານວິຊາການກວດກາປະຈຳດ່ານ 5 ຕຳແໜ່ງ, ມີວາລະໝູນວຽນ ທຸກໆ 1 ປີ;
4. ພະນັກງານຊ່ວຍວຽກຈຳນວນໜຶ່ງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

**ມາດຕາ 10. ມາດຕະຖານຕຳແໜ່ງງານ**

ມາດຕະຖານຕຳແໜ່ງງານ ພາຍໃນດ່ານກວດກາສັດຕະວະແພດສາກົນ ປະກອບມີ ດັ່ງນີ້:

1. ຫົວໜ້າດ່ານ:

- ມີຄຸນສົມບັດສົມທຳປະຕິວັດ, ກຳໄດ້ແນວທາງນະໂຍບາຍຂອງພັກ ແລະລະບຽບກົດໝາຍຂອງລັດ, ມີຄວາມໂປ່ງໃສ, ຊື່ສັດບໍລິສຸດ, ມີມະນຸດສຳພັນດີ, ມີຄວາມສາມາດເໝາະສົມກັບໜ້າທີ່ຄວາມຮັບຜິດຊອບທີ່ໄດ້ຮັບມອບໝາຍ ແລະມີຄວາມຄ່ອງແຄ້ວໃນການປະສານສົມທົບວຽກງານກັບພາກສ່ວນທີ່ກ່ຽວຂ້ອງ;
- ມີຄວາມເຂົ້າໃຈ, ສາມາດນຳພາ, ອະທິບາຍ ພ້ອມທັງຕິດຕາມການປະຕິບັດວຽກງານຂອງພະນັກງານກວດກາປະຈຳດ່ານ;
- ມີຫົວຄິດປະດິດສ້າງ ແລະມັກຊອກຮູ້ຮໍ່າຮຽນ ເພື່ອປັບປຸງ ແລະພັດທະນາວຽກງານຂອງຕົນ;ມີປະສົບການເຮັດວຽກຢູ່ດ່ານ ຫຼື ການຄຸ້ມຄອງທີ່ກ່ຽວຂ້ອງຢ່າງໜ້ອຍ 2 ປີ ຂຶ້ນໄປ;
- ຈົບການສຶກສາວິຊາສະເພາະດ້ານສັດຕະວະແພດ ຫລື ລ້ຽງສັດ ແລະການປະມົງ ລະດັບຊັ້ນສູງຂຶ້ນໄປ ແລະໄດ້ຜ່ານການຝຶກອົບຮົມວຽກງານຄຸ້ມຄອງດ່ານກວດກາສັດຕະວະແພດສາກົນ;
- ມີສຸຂະພາບສົມບູນດີ, ປະຫວັດຈະແຈ້ງ ແລະບໍ່ເຄີຍຕ້ອງໂທດ;
- ຮູ້ພາສາອັງກິດ ຫລືພາສາຂອງປະເທດໃກ້ຄຽງທີ່ມີຊາຍແດນຕິດກັບ ທີ່ດ່ານຕັ້ງຢູ່.

2. ຮອງຫົວໜ້າດ່ານ:

- ມີຄຸນສົມບັດສົມທຳປະຕິວັດ, ກຳໄດ້ແນວທາງນະໂຍບາຍຂອງພັກ ແລະລະບຽບກົດໝາຍຂອງລັດ, ມີຄວາມໂປ່ງໃສ, ຊື່ສັດບໍລິສຸດມີມະນຸດສຳພັນດີ, ມີຄວາມສາມາດເໝາະສົມກັບໜ້າທີ່ຄວາມຮັບຜິດຊອບທີ່ໄດ້ຮັບມອບໝາຍ;
- ມີປະສົບການກ່ຽວກັບວຽກງານທີ່ກ່ຽວຂ້ອງຢ່າງໜ້ອຍ 2 ປີ ຂຶ້ນໄປ;
- ມີຫົວຄິດປະດິດສ້າງ ແລະ ມັກຊອກຮູ້ຮໍ່າຮຽນ ເພື່ອປັບປຸງ ແລະພັດທະນາວຽກງານຂອງຕົນ;
- ມີມະນຸດສຳພັນດີ ແລະມີຄວາມສາມາດຄ່ອງແຄ້ວໃນການປະສານວຽກງານກັບພາກສ່ວນທີ່ກ່ຽວຂ້ອງ;
- ຈົບການສຶກສາວິຊາສະເພາະດ້ານສັດຕະວະແພດ ຫລືລ້ຽງສັດ ແລະການປະມົງລະດັບຊັ້ນກາງຂຶ້ນໄປ ແລະໄດ້ຜ່ານການຝຶກອົບຮົມວຽກງານຄຸ້ມຄອງດ່ານກວດກາສັດຕະວະແພດສາກົນ;

- ມີສຸຂະພາບສົມບູນດີ, ປະຫວັດຈະແຈ້ງ ແລະບໍ່ເຄີຍຕ້ອງໂທດ;
- ຮູ້ພາສາອັງກິດ ຫລື ພາສາຂອງປະເທດໃກ້ຄຽງທີ່ມີຊາຍແດນຕິດກັບ ທີ່ດ່ານຕັ້ງຢູ່.

3. ພະນັກງານວິຊາການກວດກາປະຈຳດ່ານ:
- ມີຄຸນສົມບັດ, ມີຄວາມຫ້າວຫັນຕໍ່ໜ້າທີ່ວຽກງານ, ມີມະນຸດສຳພັນດີ ແລະຮູ້ປະສານວຽກງານກັບພາກສ່ວນທີ່ກ່ຽວຂ້ອງ;
- ມີຫົວຄິດປະດິດສ້າງ ແລະ ມັກຊອກຮູ້ຮໍ່າຮຽນ ເພື່ອປັບປຸງ ແລະພັດທະນາວຽກງານຂອງຕົນ;
- ຈົບການສຶກສາວິຊາສະເພາະດ້ານສັດຕະວະແພດ ຫລື ລ້ຽງສັດ ແລະການປະມົງລະດັບຊັ້ນກາງຂຶ້ນໄປ ແລະໄດ້ຜ່ານການຝຶກອົບຮົມວຽກງານຄຸ້ມຄອງດ່ານກວດກາສັດຕະວະແພດສາກົນ;
- ມີສຸຂະພາບສົມບູນດີ, ປະຫວັດຈະແຈ້ງ ແລະ ບໍ່ເຄີຍຕ້ອງໂທດ;
- ຮູ້ພາສາອັງກິດ ຫລືພາສາຂອງປະເທດໃກ້ຄຽງທີ່ມີຊາຍແດນຕິດກັບ ທີ່ດ່ານຕັ້ງຢູ່ ຍິ່ງເປັນການດີ.

**ມາດຕາ 11. ພື້ນຖານໂຄງລ່າງຂອງດ່ານກວດ ກາສັດຕະວະແພດສາກົນ**

ພື້ນຖານໂຄງລ່າງຂອງດ່ານກວດກາສັດຕະວະແພດສາກົນ ປະກອບມີ ດັ່ງນີ້:

1. ຫ້ອງການ ແລະອຸປະກອນຮັບໃຊ້ຫ້ອງການ ເຊັ່ນ: ໂຕະ, ຕັ່ງ, ຕູ້ເກັບມ້ຽນເອກະສານ, ຄອມພິວເຕີ, ໂທລະສັບ, ແຟັກ, ອີແມວ, ກ້ອງຖ່າຍຮູບ, ເຄື່ອງຄິດເລກ, ປຶ້ມບັນທຶກ, ກະດານຂ່າວ ແລະໄຟສາຍ;
2. ຫ້ອງວິໄຈພະຍາດສັດ;
3. ສະຖານທີ່ສີດພົ່ນຢາຂ້າເຊື້ອຍານພາຫະນະ ໃນກໍລະນີມີການລະບາດຂອງພະຍາດສັດ ຕາມລະບຽບກົດໝາຍ;
4. ສະຖານທີ່ກັກຂັງສັດ ແລະຜະລິດຕະພັນສິນຄ້າກ່ຽວກັບສັດຊົ່ວຄາວ ເປັນຕົ້ນ: ບ່ອນເກັບມ້ຽນຜະລິດຕະພັນສັດ, ອາຫານສັດ ແລະວັດຖຸດິບອາຫານສັດ;
5. ມີລະບົບໄຟຟ້າ ແລະນ້ຳສະອາດ;
6. ພາຫະນະອຸປະກອນຮັບໃຊ້ທີ່ຈຳເປັນຢ່າງພຽງພໍ.

## ໝວດທີ 4
## ຫລັກການ ແລະແບບແຜນວິທີເຮັດວຽກ

**ມາດຕາ 12. ຫລັກການ**

ປະຕິບັດຫລັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສົມທົບກັບການປະຕິບັດລະບອບຫົວໜ້າດຽວ ຕາມລະບົບແບ່ງຂັ້ນຄຸ້ມຄອງ ແລະບົນພື້ນຖານການແບ່ງງານກັນລະອຽດຈະແຈ້ງໃນໝູ່ຄະນະ ແລະມີການປຶກສາຫາລືກັນ ພ້ອມທັງມອບຄວາມຮັບຜິດຊອບ ແລະສິດ ໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ.

**ມາດຕາ 13. ແບບແຜນວິທີເຮັດວຽກ**

1. ຫົວໜ້າດ່ານ ມີຄວາມຮັບຜິດຊອບໂດຍກົງ ຕໍ່ຫົວໜ້າກົມລ້ຽງສັດ ແລະການປະມົງ ກ່ຽວກັບຜົນສຳເລັດ ແລະຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າດ່ານມີໜ້າທີ່ຊ່ວຍວຽກ ແລະລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະມອບໝາຍຂອງຫົວໜ້າດ່ານ;
2. ຫົວໜ້າດ່ານ ເປັນຜູ້ລົງລາຍເຊັນ ຕໍ່ບັນດາເອກະສານສຳຄັນ ກໍລະນີຕິດຂັດ ຫລື ໄປເຄື່ອນໄຫວວຽກງານທາງໄກ ຕ້ອງມອບສິດປະຈຳການຊົ່ວຄາວ ໃຫ້ຮອງຫົວນ້າດ່ານວ່າການແທນ, ໃນເມື່ອຫົວໜ້າ

ດ່ານກັບຄືນມາປະຈຳການແລ້ວ ຕ້ອງລາຍງານວຽກທີ່ຕົນເອງ ໄດ້ແກ້ໄຂ ແລະວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າດ່ານຊາບ;

3. ປະຕິບັດລະບອບພົວພັນ ແລະປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ສຳເລັດຕາມເປົ້າໝາຍ ທີ່ວາງໄວ້;
4. ປະຕິບັດລະບອບປະຊຸມ ສ່ອງແສງລາຍງານວຽກປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະປະຈຳປີ ແລ້ວສະຫລຸບລາຍງານໃຫ້ຫົວໜ້າກົມຊາບ ຕາມເວລາທີ່ໄດ້ກຳນົດ.

## ໝວດທີ 5
## ງົບປະມານ, ກາປະທັບ, ເຄື່ອງແບບ ແລະເຄື່ອງໝາຍ

**ມາດຕາ 14.** ງົບປະມານ

ດ່ານກວດກາສັດຕະວະແພດສາກົນ ນຳໃຊ້ງົບປະມານຂອງລັດ ເພື່ອການເຄື່ອນໄຫວວຽກງານຂອງຕົນຢ່າງເປັນປົກກະຕິ ຈາກກົມລ້ຽງສັດ ແລະການປະມົງ ໂດຍສະເໜີຜ່ານ ຫົວໜ້າພະແນກການສັດຕະວະແພດ.

**ມາດຕາ 15.** ກາປະທັບ, ເຄື່ອງແບບ ແລະເຄື່ອງໝາຍ

ດ່ານກວດກາສັດຕະວະແພດສາກົນ ມີກາປະທັບເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານທາງລັດຖະການ ຕາມລະບຽບກົດໝາຍ.

ເຄື່ອງແບບຂອງເຈົ້າໜ້າທີ່ປະຈຳດ່ານກວດກາສັດຕະວະແພດ ປະກອບມີ ສອງ ແບບ ດັ່ງນີ້:

1. **ສໍາລັບເພດຊາຍ:** ໂສ້ງຂາຍາວ, ເສື້ອແຂນສັ້ນ, ເຊື້ອແຂນຍາວ, ເສື້ອແຈັກເກັດ ແລະໝວກສີກາກີ ເບີສີ 275, ເກີບ ສີດຳ, ສາຍແອວສີກາກີ;
2. **ສໍາລັບເພດຍິງ:** ສິ້ນມີຕີນ, ເສື້ອແຂນສັ້ນ, ເຊື້ອແຂນຍາວ, ເສື້ອແຈັກເກັດ ແລະໝວກສີກາກີ ເບີສີ 275, ເກີບ ສີດຳ, ສາຍແອວສີກາກີ.

ເຄື່ອງໝາຍຂອງດ່ານກວດກາສັດຕະວະແພດ ແມ່ນສັນຍາລັກ ຫຼືໂລໂກ້ທີ່ມີລັກສະນະສະເພາະຂອງເຈົ້າໜ້າທີ່ສັດຕະວະແພດ ເພື່ອຕິດໃສ່ເສື້ອ, ຫົວສາຍແອວ ແລະກາຕິດຄໍເສື້ອ ດັ່ງນີ້:

1. ເນື້ອໃນຂຽນເປັນພາສາລາວ ວ່າ: **"ເຈົ້າໜ້າທີ່ດ່ານກວດກາສັດຕະວະແພດ"**;
2. ເນື້ອໃນຂຽນເປັນພາສາອັງກິດ ວ່າ: "International Animal Check Point Officer";
3. ສີສັນປະກອບ: ສີແດງ, ຂຽວ, ເຫຼືອງ, ຂາວ ແລະສີຂຽວແກ່;
4. ຮູບພາບປະກອບ: ມີຮູບກາຮວງເຂົ້າ, ດ້ານເທິງມີຮູບທຸງຊາດ, ຮູບທາດຫຼວງ, ຮູບກາແພດສີຂາວ, ຮູບສັດຢູ່ສອງຂ້າງ, ມີຂີດ, ຮູບດອກຈຳປາ ແລະມີດາວຢູ່ເຄິ່ງກາງ;
5. ໂລໂກ້ຕິດແຂນເສື້ອ: ຂະໜາດ 8,5 x 6,5 ຊັງຕີແມັດ;
6. ໂລໂກ້ຕິດຫົວສາຍແອວ: ຂະໜາດ 4,5 x 3,5 ຊັງຕີແມັດ;
7. ໂລໂກ້ຕິດຄໍເສື້ອ: ຂະໜາດ 3,0 x 3,0 ຊັງຕີແມັດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 16.** ການຈັດຕັ້ງປະຕິບັດ

ມອບໃຫ້ກົມລ້ຽງສັດ ແລະການປະມົງ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ແລະດ່ານກວດກາສັດຕະວະແພດສາກົນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 17. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ກໍານົດ ແລະກົດລະບຽບທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງກະສິກໍາ ແລະປ່າໄມ້

ວິໄລວັນ ພົມເຂ